MDH Minnesota Department of Health

TUBERCULOSIS (TB) PREVENTION AND CONTROL PROGRAM

# ການປິ່ນປົວ ການຕິດເຊື້ອ ວັນນະໂລກ ໄລຍະທີ່ເຊື້ອໂລກແຝງຕົວຢູ່ (TB) ດ້ວຍຢາ ຢາຕ້ານວັນນະໂລກ ໄອໂຊໄນ ອາຊິດ (Isoniazid ) ແລະຢາ Rifapentine (INH-RPT)

ຜົນກວດຂອງທ່ານສະແດງໃຫ້ເຫັນວ່າທ່ານຕິດເຊື້ອ ວັນນະໂລກ ໄລຍະທີ່ເຊື້ອໂລກແຝງຕົວຢູ່ (TB) ຫລື ການຕິດເຊື້ອ ວັນນະໂລກ ໄລຍະທີ່ເຊື້ອໂລກແຝງຕົວຢູ່ (LTBI.) ນີ້ໝາຍຄວາມວ່າເຊື້ອພະຍາດ TB ຢູ່ໃນຮ່າງກາຍຂອງທ່ານແລະເຮັດໃຫ້ທ່ານປ່ວຍ.

ເຊື້ອພະຍາດ TB ບໍ່ເຮັດໃຫ້ທ່ານເຈັບປ່ວຍແລະບໍ່ສາມາດແຜ່ເຊື້ອຫາຄົນອື່ນ. ຄືກັນກັບວ່າເຊື້ອພະຍາດຢູ່ໃນພາວະເຫງົານອນ. ຖ້າ ເຊື້ອພະຍາດ TB ຕື່ນຍາມໃດ, ພວກມັນສາມາດເຮັດໃຫ້ທ່ານປ່ວຍໄດ້. ນີ້ເອີ້ນວ່າ ພະຍາດ TB ທີ່ສາມາດແຜ່ເຊື້ອ. ທ່ານສາມາດແຜ່ເຊື້ອ TB ຫາຄົນອື່ນໄດ້ ຖ້າທ່ານມີ ພະຍາດ TB ທີ່ ສາມາດແຜ່ເຊື້ອ.

## ຂ້ອຍຈະປ້ອງກັນພະຍາດ TB ທີ່ ສາມາດແຜ່ເຊື້ອນີ້ໄດ້ແນວໃດ?

ທ່ານສາມາດກິນຢາເພື່ອປ້ອງກັນການໄດ້ຮັບເຊື້ອພະຍາດ TB ທີ່ສາມາດແຜ່ເຊື້ອ. ຢາຕ້ານວັນນະໂລກ ໄອໂຊໄນອາຊິດ (Isoniazid) ແລະຢາ Rifapentine ຫລື ຊື່ຫຍໍ້ (INH-RPT) ແມ່ນຢາໃຊ້ພ້ອມກັນເພື່ອຮັກສາ LTBI. ມັນຂ້າເຊື້ອພະຍາດ TB ທີ່ນອນຫລັບ ກ່ອນພວກມັນຈະເຮັດໃຫ້ທ່ານປ່ວຍ. ມັນສາມາດໃຊ້ເວລາຫລາຍເດືອນສໍາລັບຢາໃນການທໍາລາຍເຊື້ອພະຍາດ TB ເພາະວ່າພວກມັນແຂງແຮງຫລາຍ.

ທ່ານຈະພົບທ່ານໝໍ ຫລື ພະຍາບານຂອງທ່ານໜຶ່ງມື້ຕໍ່ອາທິດເປັນເວລາ 12 ອາທິດ ເພື່ອຮັບແລະກິນຢາ INH-RPT. ກິນຢາ ໂດຍບໍ່ກິນອາຫານແມ່ນດີທີ່ສຸດ. ຖ້າກະເພາະອາຫານຂອງທ່ານປັ່ນປ່ວນ, ກິນຢາ ກັບອາຫານໜ້ອຍນຶ່ງກໍ່ດີເຊັ່ນກັນ.

## ຍ້ອນຫຍັງຂ້ອຍຕ້ອງກິນຢາ ທັງໆທີ່ຂ້ອຍບໍ່ຮູ້ສຶກປ່ວຍ?

ເຊື້ອພະຍາດTB ທີ່ນອນຫລັບແມ່ນງ່າຍໃນການຖືກທໍາລາຍກ່ອນທີ່ພວກມັນຈະຕື່ນຂຶ້ນແລະເຮັດໃຫ້ທ່ານປ່ວຍໄຂ້.

## ຖ້າຂ້ອຍບໍ່ກິນຢາ ຈະເປັນຫຍັງບໍ?

ຖ້າທ່ານບໍ່ໃຊ້ຢາ INH-RPT, ຂາດຢາຫລາຍອັນ ຫລື ຢຸດກິນຢາກ່ອນທ່ານໝໍ ຫລື ພະຍາບານແນະນໍາທ່ານ, ທ່ານອາດປ່ວຍໄດ້ໂດຍທີ່ຮ່າງກາຍທ່ານບໍ່ມີ ພະຍາດ TB ທີ່ສາມາດແຜ່ເຊື້ອກໍ່ຕາມ. ມັນສໍາຄັນໃນການທໍາລາຍ ຫລື ຂ້າເຊື້ອພະຍາດ TB ເພື່ອທີ່ຕົວທ່ານແລະຄອບຄົວມີສຸຂະພາບແຂງແຮງ.

## ຖ້າຂ້ອຍມີວັກຊີນ ບີຊີຈີ (BCG VACCINE) ແດ ຈະເປັນຫຍັງບໍ?

BCG ປ້ອງກັນເດັກນ້ອຍ ຈາກ TB ທີ່ມີຮູບຮ້າຍແຮງ ແຕ່ປ້ອງກັນໄດ້ພຽງສອງສາມປີເທົ່ານັ້ນ. ມັນບໍ່ສາມາດປ້ອງກັນ ການໄດ້ຮັບພະຍາດ LTBI ຫລື ພະຍາດ TB ທີ່ສາມາດແຜ່ເຊື້ອ. ຖ້າທ່ານໄດ້ຮັບວັກຊີນ BCG ແລ້ວ, ທ່ານຄວນຈະກິນຢາ ສໍາລັບ LTBI ນໍາດ້ວຍ ເພື່ອປົກປ້ອງຕົວທ່ານເອງ ແລະຄົນອື່ນ.

## ຖ້າຂ້ອຍບໍ່ສາມາດຈ່າຍຄ່າຢາ INH-RPT ຈະເປັນຫຍັງບໍ?

ຂໍຄໍາແນະນໍາກັບທ່ານໝໍ ຫລື ພະຍາບານຂອງທ່ານໃນການຮັບຢາ TB ໂດຍບໍ່ຕ້ອງເສຍຄ່າໃດໆ ຈາກ ໂປຣແກຣມ ກ່ຽວກັບ ວັນນະໂລກ ຂອງ ພະແນກສາທາລະນະສຸກ ມິນເນໂຊຕາ ( Minnesota Department of Health Tuberculosis Program.)

# ຖ້າຂ້ອຍຍົກຍ້າຍທີ່ຢູ່ ຈະເຮັດແນວໃດ?

ສະເໜີຕໍ່ທ່ານໝໍ ຫລື ພະຍາບານຂອງທ່ານກ່ອນທ່ານຍົກຍ້າຍໄປລັດ ຫລື ເມືອງອື່ນ. ພວກເຂົາສາມາດຊ່ວຍທ່ານຮັບ ຢາ TB ຢ່າງຕໍ່ເນື່ອງ ຫລັງຈາກທ່ານຍົກຍ້າຍ.

# ແມ່ນຫຍັງທີ່ຂ້ອຍຄວນຈະຮູ້ກ່ຽວກັບ ຢາຮັກສາ LTBI ບໍ?

- ຫ້າມດື່ມເບຍ, ເຫຼົ້າອາງຸ່ນ ຫລື ເຫຼົ້າ ຈົນກວ່າທ່ານສໍາເລັດ ການປິ່ນປົວ LTBI ຂອງທ່ານ. ດື່ມເຫຼົ້າໃນຂະນະທີ່ໃຊ້ຢາ LTBI ສາມາດເປັນຜົນຮ້າຍຕໍ່ຕັບຂອງທ່ານ.
- ບອກທ່ານໝໍຂອງທ່ານກ່ຽວກັບຢາອື່ນໆທີ່ທ່ານກໍາລັງໃຊ້ ຫລື ກິນ.
- ຫລີກລ່ຽງການຖືພາ ໃນຂະນະໃຊ້ຢາ INH-RPT, ລາຍງານຫາທ່ານໝໍ ຫລື ພະຍາບານຂອງທ່ານໂດຍຮີບດ່ວນ ຖ້າທ່ານຫາກຕັ້ງທ້ອງ.

**ຄົນສ່ວນຫຼາຍໃຊ້ຢາ INH-RPT ໂດຍບໍ່ພົບບັນຫາໃດໆ. ບາງຄົນອາດພົບບັນຫາດັ່ງນີ້:**

- ມີໄຂ້ສູງຫລາຍກວ່າ ສາມມື້
- ກິນເຂົ້າບໍ່ແຊບ ຫລື ຮູ້ສຶກອິດເມື່ອຍ
- ທ້ອງໄສ້ປັ່ນປ່ວນ ຫລື ຮາກ
- ເຈັບໃນບໍລິເວນທ້ອງ
- ຍ່ຽວສີເຂັ້ມ (ຄືສີຂອງນໍ້າຊາ ຫລື ກາເຟ)
- ຜິວໜັງ ຫລື ຕາ ເຫຼືອງ
- ມີຕຸ່ມພົດຕາມຜິວໜັງ ຫລື ມີອາການຄັນ
- ຕີນມືມຶນ ຫລື ຊາ

**ຖ້າທ່ານມີອາການໃດນຶ່ງຂອງບັນຫາເຫຼົ່ານີ້:**

1. ຢຸດກິນຢາ.
2. ລາຍງານຫາທ່ານໝໍ ຫລື ພະຍາບານຂອງທ່ານໂດຍຮີບດ່ວນ. ບໍ່ຕ້ອງລໍຖ້າພົບໝໍໃນການນັດໝາຍຄັ້ງຖັດໄປ.



ໃຊ້ຢາ ຕາມທີ່ທ່ານໝໍ ຫລື ພະຍາບານຂອງທ່ານແນະນໍາ . ຖ້າທ່ານບໍ່ໄດ້ກິນຫຼາຍວັນ ,ຢາອາດບໍ່ທໍາງານ .**ເກັບຮັກສາການນັດໝາຍທາງການແພດທັງໝົດຂອງທ່ານໄວ້** . ທ່ານໝໍ ຫລື ພະຍາບານຂອງທ່ານຈະຊ່ວຍທ່ານຮັບປະກັນວ່າການປິ່ນປົວຂອງທ່ານກໍາລັງດໍາເນີນໄປດ້ວຍດີ .

ການນັດໝາຍຄັ້ງຖັດໄປ ຂອງຂ້ອຍກ່ຽວກັບ ການປິ່ນປົວTB :

ວັນທີ :

ເວລາ:

ທ່ານໝໍ ຫລື ພະຍາບານ:

ສະຖານທີ່ :

ໂທລະສັບ :




Minnesota Department of Health
Tuberculosis (TB) Prevention and Control Program
P.O. Box 64975, St. Paul, MN 55164-0975
651-201-5414
www.health.state.mn.us/tb